# ຂໍ້ແນະນຳສຳລັບການສຳຫລວດໂຄງການຍ່ອຍຂັ້ນບ້ານ

1. **ຈຸດປະສົງ:**
   - ເພື່ອດຳເນີນການສຳຫລວດ-ອອກແບບ ບັນດາໂຄງການຍ່ອຍ ທີ່ຜ່ານການຮັບຮອງເອົາ ຢູ່ກອງປະຊຸມປະສານງານການວາງແຜນຂັ້ນເມືອງ
   - ເພື່ອສ້າງຄວາມເຂັ້ມແຂງ ແລະ ຄວາມເປັນເຈົ້າການໃຫ້ແກ່ຊຸມຊົນ ໃນການອອກແບບໂຄງ ການຍ່ອຍ

2. **ຂັ້ນຕອນ:**

   **ຂັ້ນຕອນທີ່ 1:** ຈັດກອງປະຊຸມຮ່ວມກັບຊາວບ້ານ
   (ຢ່າງໜ້ອຍຜູ້ຕາງໜ້າແຕ່ລະຄອບຄົວຕ້ອງໄດ້ເຂົ້າຮ່ວມກອງປະຊຸມນີ້)

   - ແນະນຳທີມງານ ແລະ ຈຸດປະສົງ ໃນການມາເຮັດວຽກໃນຄັ້ງນີ້
   - ແຈ້ງຜົນຂອງກອງປະຊຸມປະສານງານການວາງແຜນພັດທະນາກຸ່ມບ້ານ ທີ່ຈັດຂື້ນຜ່ານມາຢູ່ເມືອງ
   - ປຶກສາຫາລື ຮູບແບບ ແລະ ລັກສະນະຂອງໂຄງການຍ່ອຍ
   - ກຳນົດທີ່ຕັ້ງໂຄງການຍ່ອຍ (ແຕ້ມແຜນວາດ ຫຼື ສາມາດນຳໃຊ້ແຜນວາດ ທີ່ໄດ້ແຕ້ມແລ້ວຢູ່ກອງປະຊຸມວາງແຜນພັດທະນາບ້ານ) ຖ້າແມ່ນລະບົບນ້ຳສະອາດຄວນສຶກສາ ເບິ່ງບ່ອນຊຸມນຸມຊົນ, ວັດ, ໂຮງຮຽນ, ຫໍປະຊຸມບ້ານ...ມີຄວາມຕ້ອງການ ຫລື ບໍ?
   - ປຶກສາຫາລືກ່ຽວກັບ ການກໍ່ສ້າງໂຄງການ ວ່າມີຜົນກະທົບ ຕໍ່ສິ່ງແວດລ້ອມ ຫຼື ບໍ? ຖ້າມີ, ໃຫ້ອະທິບາຍຂັ້ນຕອນໃນການດຳເນີນການຕໍ່ໄປ
   - ປຶກສາຫາລືກ່ຽວກັບ ການກໍ່ສ້າງໂຄງການ ວ່າມີຜົນກະທົບ ຕໍ່ສັງຄົມ ຫຼື ບໍ? ຖ້າມີ, ໃຫ້ອະທິບາຍກ່ຽວກັບນະໂຍບາຍການທົດແທນຄືນ

**ໝາຍເຫດ:** ຖ້າຫາກແມ່ນການກໍ່ສ້າງລະບົບນ້ຳລິນ ຄວນປຶກສາຫາລືບັນຫາດັ່ງນີ້ຕື່ມ:

- ປຶກສາຫາລືເຖິງຜົນປະໂຫຍດດ້ານອື່ນໆຕື່ມອີກ ໂດຍສະເພາະຖ້າຫາກປະລິມານ ຂອງແຫລ່ງນ້ຳຫລາຍ ສາມາດນຳໃຊ້ເຂົ້າໃນດ້ານໃດຕື່ມອີກແດ່ ເຊັ່ນ: ຊົນລະປະ ທານສຳລັບ ປູກເຂົ້າ, ພືດລົ້ມລຸກ, ພືດສວນຄົວ, ລ້ຽງປາ ດັ່ງນີ້ເປັນຕົ້ນ...
- ສຳຫລວດເບິ່ງວ່າ ມີຄອບຄົວໃດບໍ່ ຕ້ອງການເອົານ້ຳເຂົ້າເຮືອນໂຕເອງ. ຖ້າຫາກມີ ອາດຈະສ້າງເປັນຕົວແບບກ່ອນ ໂດຍໃຊ້ງົບປະມານຂອງເຂົາເຈົ້າເອງ. ໝາຍຄວາມວ່າ ພະຍາຍາມຄ່ຽນຄວາມຮັບຜິດຊອບໃຫ້ບຸກຄົນ ຫຼື ຄອບຄົວ ເຊັ່ນ: ໃຊ້ນ້ຳຫລາຍກໍຕ້ອງເສັຍເງິນຄ່ານ້ຳຫລາຍ ຈາກນັ້ນເມື່ອເປ່ເພກໍຈະມີເງິນສ້ອມແປງ...ແລະ ເກີດມີຄວາມຍືນຍົງຂອງໂຄງການ

**ຂັ້ນຕອນທີ່ 2:** ແຍກເປັນສອງທີມ
ລາຍລະອຽດໃນການດຳເນີນການມີດັ່ງນີ້:

**ທີມທີ່ 1:** ສຳລັບສຳຫລວດຂໍ້ມູນທາງດ້ານວິຊາການ

- ສຳຫລວດ ແລະ ວັດແທກຂໍ້ມູນຕົວຈິງ
- ເກັບກຳຂໍ້ມູນ ທີ່ດິນ/ຊັບສິນອື່ນໆ ທີ່ຈະໄດ້ຮັບຜົນກະທົບຈາການກໍ່ສ້າງໂຄງການຍ່ອຍ
- ເຮັດການປະເມີນຜົນກະທົບຕໍ່ສິ່ງແວດ, ຖ້າຫາກມີ, ກວດກາແຫລ່ງ ແລະ ຄຸນນະພາບ ຂອງວັດສະດຸທ້ອງຖິ່ນ (ແຮ່, ຊາຍ…) ທີ່ມີຢູ່ຊຸມຊົນ

**ທີມທີ່ 2:** ເກັບກຳຂໍ້ມູນ ກ່ຽວກັບການປະກອບສ່ວນ, ສ້າງຕັ້ງທີມງານຈັດຕັ້ງປະຕິບັດຂັ້ນບ້ານ, ເຮັດການປະເມີນຜົນ ທາງດ້ານສັງຄົມ ແລະ ປຶກສາຫາລື ກ່ຽວກັບ ການຄຸ້ມຄອງນຳໃຊ້ໂຄງການ ຍ່ອຍ.

- ປຶກສາຫາລື ກ່ຽວກັບຄວາມສາມາດໃນການປະກອບສ່ວນຂອງຊຸມຊົນ ເຂົ້າໃນການຈັດຕັ້ງປະຕິບັດ ໂຄງການ ເຊັ່ນ: ຫີນ, ຊາຍ, ແຮງງານ ແລະ ອື່ນໆ....

**ໝາຍເຫດ:**

- ກ່ອນທີ່ຈະປຶກສາກັບຊຸມຊົນ ທີມງານວິຊາການຕ້ອງໄດ້ຄິດໄລ່ ຈຳນວນການປະ ກອບສ່ວນ ແຕ່ລະລາຍການ ໂດຍການຄາດຄະເນກ່ອນ
- ຕ້ອງມີບົດບັນທຶກ ຢັ້ງຢືນການປະກອບສ່ວນດັ່ງກ່າວໄວ້
  - ເຮັດການປະເມີນຜົນ ຖ້າຫາກໂຄງການຍ່ອຍດັ່ງກ່າວ ມີຜົນກະທົບ ຕໍ່ສັງຄົມລ້ອມ (ນຳໃຊ້ແບບຟອມ ປ້ອງກັນຜົນກະທົບທາງດ້ານສັງຄົມ ກ່ຽວກັບການປະກອບສ່ວນ ແລະ ການທົດແທນຄືນ ຫຼື SS_CC FORM)
  - ແຕ່ງຕັ້ງທີມງານຈັດຕັ້ງປະຕິບັດຂັ້ນບ້ານ (ໃຫ້ອີງໃສ່ເງື່ອນໄຂ ແລະວິທີການຄັດເລືອກ ທີມງານຈັດຕັ້ງປະຕິບັດຂັ້ນບ້ານ)
  - ປຶກສາຫາລື ກ່ຽວກັບການຄຸ້ມຄອງນຳໃຊ້ໂຄງການຍ່ອຍ
    - ກົດລະບຽບໃນການນຳໃຊ້
    - ການສ້າງຕັ້ງກອງທຶນບູລະນະສ້ອມແປງຂັ້ນບ້ານ

**ຂັ້ນຕອນທີ່ 3:** ສະຫລຸບຜົນການສຳຫລວດໂຄງການຍ່ອຍຂັ້ນບ້ານ
(ທີມງານ 1 ແລະ ທີມງານ 2 ມາເຕົ້າໂຮມກັນອີກເທື່ອນຶ່ງ)

- ທີມງານທັງສອງທີມ ນຳສະເໜີຜົນຂອງການສຳຫລວດ ຫຼື ຜົນຂອງການປຶກສາຫາລື ໃຫ້ແກ່ພໍ່ແມ່ປະຊາຊົນທັງໝົດ ພາຍໃນບ້ານອີກເທື່ອນຶ່ງ.

**ໝາຍເຫດ:** ກະລຸນາກວດຄືນວ່າ ຮ່າງບົດສະເໜີໂຄງການຍ່ອຍ ທີ່ກ່ຽວຂ້ອງກັບບ້ານ ໄດ້ຕື່ມຂໍ້ມູນໃສ່ໝົດ ທຸກໜ້າແລ້ວ ແລະ ຮັບປະກັນວ່າ ໄດ້ເຊັນຢັ້ງຢືນໂດຍນາຍບ້ານ ແລ້ວ.

---